*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 44-54
https://doi.org/10.69692/SUJMRD090144

# Study on factors that people return to take drugs again after getting well from treatment

**Lisatteur LILIANOU[*1], Oudone PHANALASY[1], Phoui SOUKSOMVANG[1], Kedtysack XAYXANADASY[1], Khammai BOUNPHONE[1] and Sommay SILIVANH[2]**

*Department of Mathematics and Statistics, Faculty of Natural Sciences, National University of Lao, Lao PDR*

***[*1]Correspondence:***
*Lisatteur LILIANOU*
*Department of Mathematics and Statistics, Faculty of Natural Sciences, National University of Lao,*
*Tel: +856 20 5643 0439*
*E-mail: l.lilianou@nuol.edu.la*
*[2]Souphanouvong University*

***Article Info:***
*Submitted: Aug 02, 2022*
*Revised: Jan 11, 2023*
*Accepted: Jan 25, 2023*

**Abstract**

The research is the study of factors that make drug addicts return to drugs after treatment well, which has three purposes as follows: (1) study of the drug addicts in treatment centers, then return to drugs again; (2) study the cause of chemotherapy drug addicts, then return to drugs again; (3) rank and order the importance of internal factors and external factors of which makes drug addicts that treat well, then come back to drugs again. The method of this study was using questionnaires to interview people who had been treated well and then returned to drugs at the drug treatment center in Vientiane Capital and some villages. The total number of interviewees in this study is 355 interviewees. The Analytic Hierarchy Process (AHP) is applied to this study.

From the study, there are 294 males and 61 females out of 355 interviewees; the oldest is between 25-30 years old and the youngest is under 12 years old. Almost interviewees are single; the occupations of drug addicts are mostly laborers and unemployed people; the income of most drug addicts has non-regular income; the most drugs were amphetamines, cough syrups, marijuana and heroin, respectively. The key people who influence to addiction drugs are friends. Mostly, the addictive drugs used to treat are 2 and 3 times. The causes of the addiction of most interviewees are due to social conditions and lack of self-awareness; in the future, the number of drug addicts will increase even more; the solution for the drug problem in the past has so far failed because there are so many people have involved or government officials behind the drug trade; the factors that make people addicted to drugs and then return to drugs again come from not being able to cut ties with former friends who are addicted to drugs. The percentage of people who have been treated that come back to addict again is between 25% to 50%. Ranking from high to low of the 8 internal factors causing the former drug addicts to come back to the drug again are factors of attitude towards drugs, family aspects, knowledge about the drug in family and of themselves, living experience, parent education, and so on, respectively, and the rank of external factors are other people, social, penalty to retailers and drug addicts, resistance and prevention of families and organizations, trading within communities, economy, environment, and so on.

**Keywords:** *Drugs, Causes, Factors, Drug Therapy, Mathematical Models.*

## 1. ພາກສະເໜີ

ໂດຍອີງຕາມສີ່ບຸກທະລຸ ຂອງກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ກ່ຽວກັບການບຸກທະລຸໃນການລຶບລ້າງຄວາມທຸກຍາກ ແລະ ອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃຫ້ປະເທດເຮົາຫຼຸດພົ້ນຈາກປະເທດດ້ອຍພັດ ທະນາໃນປີ 2020 ທີ່ຈະມາເຖິງໃນບໍ່ດົນນີ້. ສະນັ້ນ, ວຽກງານຕ້ານ ແລະ ແກ້ໄຂບັນຫາຢາເສບຕິດກໍ່ແມ່ນວຽກງານໜຶ່ງທີ່ຈຳເປັນ ເພື່ອສາມາດລຶບລ້າງຄວາມທຸກຍາກຂອງພໍ່ແມ່ປະ ຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມຂອງປະເທດ, ເຊິ່ງວຽກດັ່ງກ່າວທາງພັກ ແລະ ລັດຖະບານເຮົາໄດ້ເອົາໃຈໃສ່ເປັນພິເສດ (ພັກປະຊາຊົນປະຕິວັດລາວ ຄະນະຈັດຕັ້ງສູນກາງພັກ, 2018).

ໃນໄລຍະ 5-6 ປີຜ່ານມາຈົນເຖິງປະຈຸບັນນີ້ ບັນຫາການຜະລິດ, ການຊົມໃຊ້, ການລັກລອບຄ້າຂາຍຢາເສບຕິດ ແລະ ປະ ກົດການຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມຄື: ການຂີ້ລັກ, ການປຸ້ນຈີ້ຊີງຊັບພົນລະເມືອງ, ການຄ້າມະນຸດ(ແຮງງານ ແລະ ໂສເພນີ), ການຕົວະຍົວະລອກລວງຊັບສິນພົນລະເມືອງ ແລະ ກໍ່ອາດສະຍາກຳຕ່າງໆທີ່ຕິດພັນກັບຢາເສບຕິດຢູ່ໃນສັງຄົມແມ່ນມີທ່າອ່ຽງແຜ່ລາມ ແລະ ຂະຫຍາຍໄປໃນວົງກວ້າງຕື່ມອີກ. ເຖິງວ່າ ພັກ ແລະ ລັດຖະບານ ຕະຫຼອດຮອດພໍ່ແມ່ປະຊາຊົນໄດ້ຮ່ວມໄມ້ຮ່ວມມືສະກັດກັ້ນ ຕ້ານ ແລະ ແກ້ໄຂບັນຫາຢາເສບຕິດຢ່າງເອົາຈິງເອົາຈັງແລ້ວກໍ່ຕາມ ແຕ່ວ່າບັນຫາປະກົດການຍໍ້ທໍ້ຕ່າງໆໃນສັງຄົມທີ່ຕິດພັນກັບຢາເສບຕິດມາຮອດປະຈຸບັນນີ້ແມ່ນຍັງບໍ່ສາມາດສະກັດກັ້ນ, ບໍ່ສາມາດຕ້ານ ແລະ ແກ້ໄຂໃຫ້ໝົດລົງໄດ້ເທື່ອ. ບັນຫາຜູ້ເສບຢາເສບຕິດທີ່ຄອບຄົວ ຫຼືການຈັດຕັ້ງໄດ້ເອົາຜູ້ກ່ຽວໄປບຳບັດຢາເສບຕິດຢູ່ສູນບຳບັດຢາເສບຕິດຕ່າງໆດີມາແລ້ວ, ແຕ່ວ່າເມື່ອຜູ້ກ່ຽວກັບຄືນມາຢູ່ຕາມບ້ານຕາມຊ່ອງຜູ້ກ່ຽວກໍ່ກັບຄືນໄປຕິດຢາເສບຕິດຄືນໃໝ່ກໍ່ຍັງເຫັນມີເປັນຈຳນວນຫຼວງຫຼາຍ, ເຊິ່ງປະຈຸບັນນີ້ບັນຫາຄົນຕິດຢາເສບຕິດແມ່ນໄດ້ແຜ່ລາມໄປເຖິງນັກຮຽນ ແລະ ນັກສຶກສາໃນສະຖາບັນການສຶກສາຕ່າງໆຄື: ນັກຮຽນໃນໂຮງຮຽນມັດທະຍົມ, ນັກຮຽນໃນໂຮງຮຽນວິຊາຊີບ, ນັກສຶກສາໃນໂຮງຮຽນວິທະຍາໄລ, ແລະ ນັກສຶກສາໃນມະຫາວິທະຍາໄລ (Somekeo SILAVONG, 2014, Phouvieng VONGPHACHAN, 2004 and Lisatteur LILIANOU, 2018)

ດັ່ງນັ້ນ, ຖ້າວ່າບັນຫາການກັບໄປເສບຢາເສບຕິດຄືນໃໝ່ຂອງຄົນທີ່ໄປບຳບັດຢາເສບຕິດດີມາແລ້ວ ບໍ່ໄດ້ຮັບການແກ້ໄຂໃຫ້ມັນໝົດໄປເທື່ອລະກ້າວນັ້ນ ການແກ້ໄຂບັນຫາຄົນຕິດຢາເສບຕິດໃນສັງຄົມກໍ່ຈະບໍ່ມີມື້ຫຼຸດລົງໄດ້, ການແກ້ໄຂປະກົດການຍໍ້ທໍ້ຕ່າງໆໃນສັງຄົມກໍ່ຈະນັບມື້ນັບຫຼາຍຂຶ້ນກວ່າເກົ່າ, ພ້ອມກັນນັ້ນ ຖ້າວ່າບໍ່ມີວິທີການທີ່ມີວິທະຍາສາດ ແລະ ເຕັກໂນໂລຊີມາແກ້ໄຂຢ່າງເໝາະສົມໃຫ້ມັນໝົດໄປຢ່າງສິ້ນເຊີງນັ້ນ ມັນຈະສົ່ງຜົນກະທົບທາງດ້ານລົບເຖິງການລຶບລ້າງຄວາມທຸກຍາກ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາຫຼາຍສົມຄວນ (Somekeo SILAVONG, 2014 and Lisatteur LILIANOU, 2018).

ຍ້ອນເຫດຜົນດັ່ງກ່າວມາຂ້າງເທິງນັ້ນ ທີມງານຂອງພວກຂ້າພະເຈົ້າ ຈຶ່ງໄດ້ຍົກເອົາຫົວຂໍ້: “ສຶກສາປັດໄຈທີ່ເຮັດໃຫ້ຄົນບຳບັດຢາເສບຕິດດີມາແລ້ວກັບໄປເສບຢາເສບຕິດອີກ” ເພື່ອມາສຶກສາເຖິງປັດໄຈທີ່ເຮັດໃຫ້ຄົນບຳບັດຢາເສບຕິດມາແລ້ວກັບໄປເສບຢາເສບຕິດຄືນໃໝ່ອີກ ແລະ ບັນຫາອື່ນໆ ທີ່ກ່ຽວຂ້ອງກັບຢາເສບຕິດ, ແລ້ວຊອກຫາວິທີການແກ້ໄຂບັນຫາຢາເສບຕິດຢ່າງເໝາະທີ່ມີວິທະຍາສາດເຕັກໂນໂລຊີ ແລະ ມີຄວາມເໝາະສົມ, ເຊິ່ງວິທີການແກ້ໄຂບັນຫາຄົນບຳບັດຢາເສບຕິດດີມາແລ້ວກັບຄືນຕິດຢາເສບຕິດຄືນໃໝ່ນີ້ ຈະສາມາດຊ່ວຍໃຫ້ພາກສ່ວນທີ່ກ່ຽວຂ້ອງ ນາໄປແກ້ໄຂບັນຫາການກັບຄືນໄປຕິດຢາເສບຕິດຂອງຄົນຢູ່ໃນສັງຄົມໄດ້ ຫຼື ສາມາດສະກັດກັ້ນ ແລະ ຕ້ານບັນຫາຢາເສບຕິດໃນສັງຄົມໄດ້. ຈາກນັ້ນ ກໍ່ຈະເຮັດໃຫ້ການລຶບລ້າງຄວາມທຸກຍາກຂອງພໍ່ແມ່ປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ກໍ່ຈະມີຄວາມສະດວກ ແລະ ວ່ອງໄວຍິ່ງຂຶ້ນ.

ການເຮັດການຄົ້ນຄວ້າວິທະຍາສາດຄັ້ງນີ້ ທີມງານຂອງພວກຂ້າພະເຈົ້າມີຈຸດປະສົງໃນການຄົ້ນຄວ້າຄື: 1) ສຶກສາຂໍ້ມູນທົ່ວໄປຂອງຄົນທີ່ບຳບັດຢາເສບຕິດຢູ່ສູນບຳບັດຢາເສບຕິດດີແລ້ວກັບຄືນໄປເສບຢາເສບຕິດອີກ, 2) ສຶກສາສາເຫດທີ່ເຮັດໃຫ້ຄົນບຳບັດຢາເສບຕິດດີແລ້ວກັບຄືນໄປເສບຢາເສບຕິດອີກ ແລະ 3) ເພື່ອຈັດລຽນລຳດັບ ແລະ ລະດັບຄວາມສຳຄັນຂອງປັດໄຈພາຍໃນ ແລະ ປັດໄຈພາຍນອກດ້ານຕ່າງໆ ທີ່ເຮັດໃຫ້ຄົນກັບຄືນໄປເສບຢາເສບຕິດພາຍຫຼັງບຳບັດຢາເສບຕິດດີແລ້ວ.

## 2. ອຸປະກອນ ແລະ ວິທີການ

**2.1 ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງທີ່ນໍາມາຄົ້ນຄວ້າຄັ້ງນີ້ ແມ່ນເລືອກມາ ຈາກຂໍ້ມູນ ຂອງສູນບໍາບັດຢາເສບຕິດ ນະຄອນຫຼວງວຽງຈັນ (ທີ່ ບ້ານສົມສະຫງ່າ), ສູນບໍາບັດຢາເສບຕິດ ກົມຄຸມຂັງ-ດັດສ້າງ ກະຊວງປ້ອງກັນຄວາມສະຫງົບ ແລະ ບ້ານປະຊາຊົນທີ່ຂຶ້ນກັບ ເມືອງໂພນໂຮງ, ເມືອງເຟືອງ ແລະ ເມືອງໝື່ນ ແຂວງວຽງຈັນ, ຈໍານວນທັງໝົດ 355 ຄົນ ເລີ່ມແຕ່ປີ 2015-2020, ໂດຍນໍາໃຊ້ສູດຄິດໄລ່ຂອງ Taro Yamane (ອ້າງໃນ Sounthone PHOMMASONE, 2000) ໃນກໍລະນີບໍ່ຮູ້ຈໍານວນປະຊາກອນທີ່ແທ້ຈິງ ດັ່ງສູດຄິດໄລ່ລຸ່ມນີ້:

$$n = \frac{p(1-p)Z^2}{e^2} = \frac{0.5(1-0.5)(1.96)^2}{(0.05)^2} = 384.16 \approx 384$$

ແຕ່ວ່າຜ່ານກັບລົງເກັບກໍາຂໍ້ມູນ ສາມາດສໍາພາດຕົວຈິງໄດ້ທັງໝົດ 355 ຄົນ

**2.2 ເຄື່ອງມື**

ທີມງານຂອງພວກຂ້າພະເຈົ້າ ໄດ້ນໍາແບບສອບຖາມໄປສໍາພາດຕົວຈິງ ກ່ຽວກັບບັນດາປັດໄຈດ້ານຕ່າງໆ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບໍາບັດດີມາແລ້ວ ກັບຄືນໄປເສບຢາເສບຕິດອີກ ເຊິ່ງປະກອບມີ ດັ່ງນີ້:

- **ປັດໃຈພາຍໃນ ປະກອບມີ 8 ດ້ານ ຄື:**

ດ້ານທີ່ 1: ປັດໄຈທາງດ້ານບຸກຄະລິກກະພາບ (A)

ດ້ານທີ່ 2: ປັດໄຈທາງດ້ານປະສົບການດໍາລົງຊີວິດ (B)

ດ້ານທີ່ 3: ປັດໄຈທາງດ້ານທັດສະນະຄະຕິຕໍ່ຢາເສບຕິດ (C)

ດ້ານທີ່ 4: ປັດໄຈທາງດ້ານການລ້ຽງດູຂອງພໍ່ແມ່ (D)

ດ້ານທີ່ 5: ປັດໄຈທາງດ້ານການສຶກສາອົບຮົມຂອງພໍ່ແມ່ (E)

ດ້ານທີ່ 6: ປັດໄຈທາງດ້ານຄວາມຮູ້ກ່ຽວກັບຢາເສບຕິດຈາກຄອບຄົວ ແລະ ຕົນເອງ (G)

ດ້ານທີ່ 7: ປັດໄຈດ້ານມາຈາກຕົນເອງປັດໄຈທີ່ເຮັດໃຫ້ຄົນຕິດຢາເສບຕິດ (K)

ດ້ານທີ່ 8: ປັດໄຈທາງດ້ານການຕ້ານ ແລະ ປ້ອງກັນຢາເສບຕິດດ້ວຍຕົນເອງ (N)

- **ປັດໃຈພາຍໃນ ປະກອບມີ 9 ດ້ານ ຄື:**

ດ້ານທີ່ 1: ປັດໄຈທາງດ້ານຄວາມຮັບຮູ້ກ່ຽວກັບຢາເສບຕິດຈາກການຈັດຕັ້ງ (F)

ດ້ານທີ່ 2: ປັດໄຈທາງດ້ານສັງຄົມ (H)

ດ້ານທີ່ 3: ປັດໄຈທາງດ້ານສະພາບແວດລ້ອມ (I)

ດ້ານທີ່ 4: ປັດໄຈທາງດ້ານເສດຖະກິດ (J)

ດ້ານທີ່ 5: ປັດໄຈດ້ານມາຈາກຄົນອື່ນ(ປັດໄຈທີ່ເຮັດໃຫ້ຄົນຕິດຢາເສບຕິດ) (L)

ດ້ານທີ່ 6: ປັດໄຈທາງດ້ານການຊື້ຂາຍຢາເສບຕິດຢູ່ພາຍໃນທ້ອງຖິ່ນ (M)

ດ້ານທີ່ 7: ປັດໄຈທາງດ້ານການຕ້ານ ແລະ ປ້ອງກັນຢາເສບຕິດ ຈາກຄອບຄົວ ແລະ ການຈັດຕັ້ງ (O)

ດ້ານທີ່ 8: ປັດໄຈທາງດ້ານການລົງໂທດຕໍ່ຜູ້ຊື້ຂາຍຢາເສບຕິດລາຍຍ່ອຍ ແລະ ຜູ້ເສບຢາເສບຕິດ (P)

ດ້ານທີ່ 9: ປັດໄຈທາງດ້ານການລົງໂທດຕໍ່ຜູ້ຂາຍຢາເສບຕິດລາຍໃຫຍ່ ແລະ ພະນັກງານລັດ (Q)

**2.3 ການກໍານົດຕົວປ່ຽນ**

- ຕົວປ່ຽນຕາມ ໄດ້ແກ່: ການກັບຄືນໄປເສບຢາເສບຕິດພາຍຫຼັງບໍາບັດດີແລ້ວ (X)
- ຕົວປ່ຽນເອກະລາດ ໄດ້ແກ່: ປັດໄຈພາຍໃນ ແລະ ປັດໃຈພາຍນອກ ລວມທັງໝົດມີຈໍານວນ 17 ປັດໄຈຍ່ອຍ

**2.4 ວິທີວິເຄາະຂໍ້ມູນ**

**2.4.1 ການວິເຄາະທາງດ້ານສະຖິຕິ**

ການວິເຄາະຂໍ້ມູນທາງດ້ານສະຖິຕິ ແມ່ນນໍາໃຊ້ສະຖິພັນລະນາເພື່ອວິເຄາະຂໍ້ມູນທົ່ວໄປ ແລະ ຄໍາຄິດເຫັນສ່ວນບຸກຄົນຂອງຜູ້ຕອບແບບສອບຖາມ.

**2.4.2 ການວິເຄາະຂໍ້ມູນທາງດ້ານແບບຈໍາລອງທາງຄະນິດສາດ**

ການວິເຄາະຂໍ້ມູນທາງດ້ານແບບຈໍາລອງທາງຄະນິດສາດ ແມ່ນນໍາໃຊ້ຂະບວນການວິເຄາະເປັນຂັ້ນ ເພື່ອຈັດລໍາດັບຄວາມສໍາຄັນຂອງບັນດາປັດໄຈຍ່ອຍ ແລະ ປັດໄຈແຕ່ລະດ້ານ.

### 2.4.3 ຕາຕະລາງຂໍ້ມູນຂອງມາຕຣິສ໌

1. ການສ້າງຕາຕະລາງມາຕຣິສ໌ໃນການກຳນົດຂໍ້ມູນ

ຕາຕະລາງທີ 2.1 ຕາຕະລາງມາຕຣິສ໌

| ປັດໄຈ / ລະດັບຄະແນນ | **$a_1$** | **$a_2$** | **a3** | … | **$a_n$** | |
|---|---|---|---|---|---|---|
| ຫຼາຍທີ່ສຸດ (5) | $a_{11}$ | $a_{12}$ | $a_{13}$ | … | $a_{1n}$ | $\sum_{j=1}^{n} a_{1j}$ |
| ຫຼາຍ (4) | $a_{21}$ | $a_{22}$ | $a_{23}$ | … | $a_{2n}$ | $\sum_{j=1}^{n} a_{2j}$ |
| ປານກາງ (3) | $a_{31}$ | $a_{32}$ | $a_{33}$ | … | $a_{3n}$ | $\sum_{j=1}^{n} a_{3j}$ |
| ໜ້ອຍ (2) | $a_{41}$ | $a_{42}$ | $a_{43}$ | … | $a_{4n}$ | $\sum_{j=1}^{n} a_{4j}$ |
| ໜ້ອຍທີ່ສຸດ (1) | $a_{51}$ | $a_{52}$ | $a_{53}$ | … | $a_{5n}$ | $\sum_{j=1}^{n} a_{5j}$ |
| | $\sum_{i=1}^{5} a_{1i}$ | $\sum_{i=1}^{5} a_{2i}$ | $\sum_{i=1}^{5} a_{3i}$ | … | $\sum_{i=1}^{5} a_{ni}$ | |

ຈາກຕາຕະລາງທີ 2.1, ມີ 5 ແຖວ ແລະ n ຖັນ, ແລ້ວສ້າງໄດ້ມາຕຣິສ໌ຂໍ້ມູນ $A$ ດັ່ງລຸ່ມນີ້:

$$A = \begin{bmatrix} a_{11} & a_{12} & a_{13} & . & . & . & a_{1n} \\ a_{21} & a_{22} & a_{23} & . & . & . & a_{2n} \\ a_{31} & a_{32} & a_{33} & . & . & . & a_{3n} \\ a_{41} & a_{42} & a_{43} & . & . & . & a_{4n} \\ a_{51} & a_{52} & a_{53} & . & . & . & a_{5n} \end{bmatrix}_{5\times n}$$ ຫຼື ຂຽນຫຍໍ້ດ້ວຍ $A = \left(a_{ij}\right),\ 1 \le i \le 5,\ \ 1 \le j \le n$

ໃນນັ້ນ $a_1$ ຫາ $a_n$ ແມ່ນປັດໄຈຍ່ອຍຕ່າງໆ, $a_{ij}$ ແມ່ນຄະແນນຄວາມຄິດເຫັນຂອງຜູ້ຕອບແບບສອບຖາມຂອງແຖວທີ i ແລະ ຖັນທີ j ເຫັນວ່າລະດັບກາງຢູ່ໃນຕາຕະລາງ, ຄະແນນ ແມ່ນລະດັບຄະແນນຄວາມຄິດເຫັນແຕ່ 1 ຫາ 5 ເປັນຄ່າທີ່ກຳນົດໃຫ້ເລືອກ.

2. ກຳນົດຂໍ້ມູນຂອງເມຕຣິສ໌

$$A = \begin{bmatrix} a_{11} & a_{12} & a_{13} & . & . & . & a_{1n} \\ a_{21} & a_{22} & a_{23} & . & . & . & a_{2n} \\ a_{31} & a_{32} & a_{33} & . & . & . & a_{3n} \\ . & & & & & & \\ . & & & & & & \\ . & & & & & & \\ a_{m1} & a_{m2} & a_{m3} & . & . & . & a_{mn} \end{bmatrix}_{m\times n} \qquad (2.1)$$

3. ການຄິດໄລ່ແບບສ່ວນຮ້ອຍມີ 2 ກໍລະນີຄື:

ກໍລະນີທີ 1 ຖ້າວ່າການບວກຕາມຖັນຂອງແຕ່ລະຖັນມີຄ່າເທົ່າກັນໝົດ.

$\sum_{i=1}^{m} a_{i1} = \sum_{i=1}^{n} a_{i2} = \dots \sum_{i=1}^{m} a_{in}$ ຖ້າວ່າມີ 5 ແຖວ $\sum_{i=1}^{5} a_{i1} = \sum_{i=1}^{5} a_{i2} = \dots \sum_{i=1}^{5} a_{in}$

ຈະໄດ້ $A = \left(a_{ij}\right)$ ເອົາຂໍ້ມູນຄິດໄລ່ເປັນສ່ວນຮ້ອຍ ຫຼື ບໍ່ຄິດໄລ່ກໍ່ໄດ້ສາມາດສ້າງມາຕຣິດໄດ້ເລີຍ.

ກໍລະນີ 2 ຖ້າວ່າການບວກຕາມຖັນຂອງແຕ່ລະຖັນມີບາງຄ່າບໍ່ເທົ່າກັນ ຫຼື ຕ່າງກັນ

$$\sum_{i=1}^{5} a_{i1} = \sum_{i=1}^{5} a_{i2} \neq \sum_{i=1}^{5} a_{i3} = \dots \neq \sum_{i=1}^{5} a_{in}$$

ຈະໄດ້ $A' = \left(a'_{ij}\right)$ ໃຊ້ຮູບຮ່າງສ່ວນຮ້ອຍໄດ້: $A = \left(a_{ij}\right), a_{ij} = \dfrac{N \times a'_{ij}}{\sum_{i=1}^{5} a_i}$ (2.2)

4. ສ້າງມາຕຣິສ໌ຂຶ້ນມາຈາກການຄິດໄລ່ຄ່າຂອງຮູບແບບສ່ວນຮ້ອຍ ໃນສູດ (2.2) ແລ້ວຈະໄດ້ຮູບແບບມາຕຣິສ໌ $A$.

$$A = \begin{bmatrix} a_{11} & a_{12} & a_{13} & . & . & . & a_{1n} \\ a_{21} & a_{22} & a_{23} & . & . & . & a_{2n} \\ a_{31} & a_{32} & a_{33} & . & . & . & a_{3n} \\ a_{41} & a_{42} & a_{43} & . & . & . & a_{4n} \\ a_{51} & a_{52} & a_{53} & . & . & . & a_{5n} \end{bmatrix}_{5\times n} \quad (2.3)$$

5. ຊອກຫາຜົນບວກຕາມຖັນຂອງມາຕຣິສ໌ ເພື່ອຄິດໄລ່ມາຕຣິດສົມທຽບ $A_1$ ແລະ ມີສູດດັ່ງລຸ່ມນີ້:

$$A_1 = \begin{bmatrix} \frac{a_1}{a_1} & \frac{a_1}{a_2} & \frac{a_1}{a_3} & . & . & . & \frac{a_1}{a_n} \\ \frac{a_2}{a_1} & \frac{a_2}{a_2} & \frac{a_2}{a_3} & . & . & . & \frac{a_2}{a_n} \\ \dots & \dots & \dots & \dots & \dots & \dots & \dots \\ \frac{a_5}{a_1} & \frac{a_5}{a_2} & \frac{a_5}{a_3} & . & . & . & \frac{a_5}{a_n} \end{bmatrix}_{5\times n} \quad (2.4)$$

5. ຄຳນວນຄ່າສະຖຽນໃຫຍ່ສຸດໃກ້ຄຽງ ແລະ ເວັກເຕີສະຖຽນໃກ້ຄຽງຂອງມາຕຣິດສົມທຽບ (ເວັກເຕີນໍ້າໜັກ) $w_A$ ດ້ວຍສູດລຸ່ມນີ້:

$$w_i = \frac{\tilde{w}_i}{\sum_{i=1}^{n} \tilde{w}_i}; w_A = \left(w_1,\ w_2, \dots, w_n\right)^T \quad (2.5)$$

6. ຊອກລຳດັບຄວາມສຳຄັນຂອງປັດໄຈຍ່ອຍ ແລະ ປັດໄຈຫຼັກແຕ່ລະດ້ານ ໂດຍນຳໃຊ້ສູດມາຕຣິສ໌ $P_A$ ດັ່ງລຸ່ມນີ້:

$$P_A = A_1 * w_A = \begin{bmatrix} A_{11} & A_{12} \dots A_{1n} \\ A_{21} & A_{22} \dots A_{2n} \\ . & . \quad . \quad . \\ . & . \quad . \quad . \\ A_{n1} & A_{n2} \dots A_{nn} \end{bmatrix} \begin{bmatrix} w_{A1} \\ w_{A2} \\ . \\ . \\ w_{An} \end{bmatrix} = \begin{bmatrix} A_1 w_A \\ A_2 w_A \\ . \\ . \\ A_{5n} w_{An} \end{bmatrix}$$

(Cai Zhi Jie, Tan Yong Ji, 1996 and Jiang Qi Yuan, 2003)

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນ ເພດຊາຍ ມີຈຳນວນ 294 ຄົນ ເທົ່າກັບ 82.82% ແລະ ເພດຍິງ ມີ 61 ຄົນ ເທົ່າກັບ 17.18%; ມີອາຍຸຢູ່ໃນຊ່ວງ 25-30 ປີ ມີ 120 ຄົນ ເທົ່າກັບ 33.80% ແລະ ໜ້ອຍສຸດ ແມ່ນອາຍຸຢູ່ໃນຊ່ວງຕໍ່າກວ່າ 12 ປີ 1 ຄົນ ເທົ່າກັບ 0.28%; ສ່ວນໃຫຍ່ແມ່ນມີອ້າຍເອື້ອຍນ້ອງຮ່ວມພໍ່ແມ່ດຽວກັນ 3 ຄົນ ມີ 71 ຄົນ ເທົ່າກັບ 20.00%; ສະຖານະພາບຂອງຜູ້ຕອບແບບສອບຖາມ ສ່ວນຫຼາຍແມ່ນຍັງໂສດ ມີ 252 ຄົນ ເທົ່າກັບ 70.98%; ລະດັບການສຶກສາ ແມ່ນຮຽນມັດທະຍົມຕອນຕົ້ນ ມີ 131 ຄົນ ເທົ່າກັບ 36.90% ແລະ ຮຽນມັດທະຍົມຕອນປາຍ ມີ 116 ຄົນ ເທົ່າກັບ 32.67%; ສ່ວນໃຫຍ່ມີອາຊີບ ເປັນກຳມະກອນຮັບຈ້າງ ມີ 128 ຄົນ ເທົ່າກັບ 36.05% ແລະ ຕໍ່ມາແມ່ນຫວ່າງງານ ມີ 65 ຄົນ ເທົ່າກັບ 18.31%; ສ່ວນໃຫຍ່ແມ່ນມີລາຍຮັບສະເລ່ຍຕໍ່ເດືອນທີ່ບໍ່ແນ່ນອນ ມີ 161 ຄົນ ເທົ່າກັບ 45.35% ແລະ ຕໍ່ມາລາຍຮັບສະເລ່ຍຕໍ່ເດືອນຢູ່ໃນຊ່ວງ 1,100,000-1,500,000 ກີບ ມີ 64 ຄົນ ເທົ່າກັບ 18.03%; ຖານະຄອບຄົວ ເຫັນວ່າ ສ່ວນໃຫຍ່ແມ່ນມີຖານະປານກາງ ມີ 288 ຄົນ ເທົ່າກັບ 81.13%; ລາຍຮັບຄອບຄົວໃນແຕ່ລະເດືອນ ເຫັນວ່າ ພໍໃຊ້ ມີ 263 ຄົນ ເທົ່າກັບ 74.09%; ປະເພດຢາເສບຕິດທີ່ຜູ້ເສບຢາເສບຕິດເຄີຍເສບຫຼາຍກວ່າໝູ່ແມ່ນ ປະເພດຢາບ້າ, ຮອງລົງມາແມ່ນຢາໄອ, ຕໍ່ມາ ແມ່ນກັນຊາ, ເຮໂລອິນ ແລະ ປະເພດອື່ນໆຕາມລຳດັບ; ສ່ວນໃຫຍ່ແລ້ວ ບຸກຄົນໃກ້ຊິດທີ່ສຸດຂອງຜູ້ເສບຢາເສບຕິດທີ່ເຮັດໃຫ້ຕົນເອງໄປເສບຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ, ແມ່ນຕົວຜູ້ກ່ຽວຕັ້ງໃຈໄປເສບຢາເສບຕິດເອງ, ໝູ່ເພື່ອນໃນໂຮງຮຽນ ຕາມລຳດັບ; ບຸກຄົນທີ່ມີຄວາມສຳຄັນທີ່ສຸດທີ່ເຮັດໃຫ້ຜູ້ຕອບແບບສອບຖາມເສບຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ, ຜູ້ກ່ຽວຕັ້ງໃຈໄປເສບຢາເສບຕິດເອງ, ເພື່ອນໃນໂຮງຮຽນ, ແລະ ບຸກຄົນອື່ນໆຕາມລຳດັບ; ໂດຍສ່ວນໃຫຍ່ແລ້ວ ຈານວນຄັ້ງທີ່ມາບຳບັດຢາເສບຕິດ ແມ່ນ 2 ຄັ້ງ ມີ 215 ຄົນ ເທົ່າກັບ 60.56%.

### 3.2 ຜົນການສຶກສາກ່ຽວກັບຄວາມຄິດເຫັນສ່ວນບຸກຄົນຂອງຜູ້ຕອບສອບຖາມ

ຄວາມຄິດເຫັນກ່ຽວກັບ ການລອງເສບຢາເສບຕິດ ສ່ວນຫຼາຍແມ່ນກ່ອນຕິດຢາເສບຕິດເຄີຍໄດ້ລອງເສບຢາເສບຕິດມາກ່ອນ ເປັນບາງຄັ້ງຄາວ ມີ 215 ຄົນ ເທົ່າກັບ 60.56% ແລະ ເຄີຍລອງຢາເສບຕິດເລື້ອຍໆ ມີ 100 ຄົນ ເທົ່າກັບ 28.17%; ເປີເຊັນຄົນຕິດຢາເສບຕິດຢູ່ໃນທ້ອງຖິ່ນຂອງຕົນ ແມ່ນຢູ່ໃນຊ່ວງ 25% - 50% ມີ 125 ຄົນ ເທົ່າກັບ 35.21% ແລະ ຢູ່ໃນຊ່ວງ 51% - 75% ມີ 86 ຄົນ ເທົ່າກັບ 24.24%; ສາເຫດຂອງການຕິດຢາເສບຕິດ ເຫັນວ່າ ສາເຫດສຳຄັນເປັນລະດັບທີ 1 ແມ່ນຍ້ອນສະພາບສັງຄົມພາໄປ, ຍ້ອນຂາດສະຕິລະວັງຕົວ, ຍ້ອນສະພາບແວດລ້ອມ, ຍ້ອນຢາກໃຫ້ໝູ່ເພື່ອນຍອມຮັບຕົນເອງ, ຍ້ອນສະພາບຄອບຄົວພໍ່ແມ່ ແລະ ສາເຫດອື່ນໆຕາມລຳດັບ; ເຫດຜົນຄົນຕິດຢາເສບຕິດທີ່ບຳບັດຢາເສບຕິດດີແລ້ວກັບຄືນໄປເສບຢາເສບຕິດອີກ ເຫັນວ່າເຫດຜົນສຳຄັນເປັນລະດັບທີ 1 ແມ່ນຍ້ອນສະພາບສັງຄົມພາໄປ, ຍ້ອນຂາດສະຕິລະວັງຕົວ, ຍ້ອນສະພາບແວດລ້ອມ ແລະ ຍ້ອນສະພາບຄອບຄົວພໍ່ແມ່, ຍ້ອນຢາກໃຫ້ໝູ່ເພື່ອນຍອມຮັບຕົນເອງ, ຍ້ອນບໍ່ສາມາດເຊົາຢາເສບຕິດໄດ້ ແລະ ເຫດຜົນອື່ນໆຕາມລຳດັບ; ແນວໂນ້ມການຕິດຢາເສບຕິດເຫັນວ່າ ມີແນວໂນ້ມຈະເພີ່ມຂຶ້ນຫຼາຍກວ່າເກົ່າ ມີ 136 ຄົນ ເທົ່າກັບ 38.31%, ຮອງລົງມາ ມີແນວໂນ້ມຂອງຄົນຕິດຢາເສບຕິດໃນອະນາຄົດຈະຫຼຸດລົງ ມີ 132 ຄົນ ເທົ່າກັບ 37.18%; ສາເຫດທີ່ບໍ່ສາມາດແກ້ໄຂບັນຫາຢາເສບຕິດຜ່ານມາໄດ້ຢ່າງເດັດຂາດ ແລະ ເຮັດໃຫ້ຢາເສບຕິດຢູ່ໃນສັງຄົມບໍ່ໝົດຈັກເທື່ອ ຄື: ສາເຫດທີ່ສຳຄັນເປັນລະດັບທີ 1 ແມ່ນຍ້ອນມີຄົນທີ່ມີອິດທິພົນຢູ່ເບື້ອງຫຼັງຂອງການຊື້ຂາຍຢາເສບຕິດ, ຍ້ອນຜູ້ເສບຢາເສບຕິດບໍ່ສາມາດເຊົາໄດ້, ຍ້ອນມີຄົນທີ່ມີອິດທິພົນຄ້າຂາຍຢາເສບຕິດ, ຍ້ອນບັນຫາອື່ນໆ, ຍ້ອນມີພະນັກ ງານລັດຢູ່ເບື້ອງຫຼັງຂອງການຄ້າຂາຍຢາເສບຕິດ, ການຕ້ານ ແລະ ການປາບປາມຢາເສບຕິດຂອງລັດຖະບານບໍ່ເຂັ້ມງວດ ແລະ ສາເຫດອື່ນໆຕາມລຳດັບ; ຄວາມຄິດເຫັນກ່ຽວກັບສະພາບການບຳບັດຢາເສບຕິດໃນປະຈຸບັນ ເຫັນວ່າ ການບຳບັດຢາເສບຕິດສຳຄັນເປັນລະດັບທີ 1 ແມ່ນວິທີບຳບັດຢາເສບຕິດໃນປະຈຸບັນນີ້ທາງດ້ານວິຊາການມີຄວາມຖືກຕ້ອງ ແລະ ເໝາະສົມດີແລ້ວ, ການບຳບັດ ແມ່ນວິທີບຳບັດຢາເສບຕິດໃນປະຈຸບັນນີ້ທາງດ້ານວິຊາການຍັງບໍ່ທັນຖືກຕ້ອງ ແລະ ບໍ່ທັນເໝາະສົມປານໃດ, ສະຖານທີ່ໃຊ້ບຳບັດຢາເສບຕິດໃຫ້ຄົນທີ່ມາບຳບັດຢາເສບຕິດຍັງບໍ່ພຽງພໍເທື່ອ, ສະຖານທີ່ໃຊ້ບຳບັດຢາເສບຕິດໃຫ້ຄົນທີ່ມາບຳບັດຢາເສບຕິດເໝາະສົມດີແລ້ວ

ແລະ ອື່ນໆ ຕາມລຳດັບ; ຄວາມຄິດເຫັນກ່ຽວກັບປັດໄຈທີ່ເຮັດໃຫ້ຄົນບຳບັດຢາເສບຕິດດີແລ້ວ ກັບຄືນໄປເສບຢາເສບຕິດອີກ ເຫັນວ່າມີປັດໄຈສຳຄັນຄື:ປັດໄຈມາຈາກການ ບໍ່ສາມາດຕັດຂາດການພົວພັນກັບພວກໝູ່ເພື່ອນເກົ່າທີ່ຕິດຢາເສບຕິດ, ປັດໄຈການມັກດື່ມເຫຼົ້າ ຫຼື ມັກດື່ມເບຍ, ປັດໄຈການມັກໄປຫຼິ້ນໃນຮ້ານບັນເທີງ ແລະ ການບຳບັດຢາເສບຕິດບໍ່ສາມາດດີຂາດໄດ້, ປັດໄຈມາຈາກ ການກຽດຊັງຂອງຄົນໃນສັງຄົມ, ປັດໄຈມາຈາກການມີສະຖານທີ່ເສບຢາເສບຕິດຫຼາຍຢູ່ໃກ້ບ້ານຂອງຕົນເອງ ແລະ ປັດໄຈອື່ນໆຕາມລຳດັບ;ເປີເຊັນຄົນຕິດຢາເສບຕິດທີ່ຜ່ານການບຳບັດດີແລ້ວແຕ່ຊ້ຳພັດກັບຄືນໄປເສບຢາເສບຕິດອີກ ເຫັນວ່າ ສ່ວນຫຼາຍແມ່ນຢູ່ໃນຊ່ວງ 25% - 50%, ຄົນຕິດຢາເສບຕິດທີ່ຜ່ານການບຳບັດດີແລ້ວແຕ່ຊ້ຳພັດກັບຄືນໄປເສບຢາເສບຕິດອີກມີ 111 ຄົນ ເທົ່າກັບ 31.27%, ຮອງລົງມາແມ່ນຢູ່ໃນຊ່ວງ 51% - 75%, ຄົນຕິດຢາເສບຕິດທີ່ຜ່ານການບຳບັດດີແລ້ວແຕ່ຊ້ຳພັດກັບຄືນໄປເສບຢາເສບຕິດອີກມີ 107 ຄົນ ເທົ່າກັບ 30.14%, ຢູ່ໃນຊ່ວງຫຼາຍກວ່າ 75% ຂຶ້ນໄປ.

### 3.3 ຜົນການສຶກສາກ່ຽວປັດໄຈພາຍໃນ ແລະ ປັດໄຈພາຍນອກ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປເສບຢາເສບຕິດອີກ

ປັດໄຈພາຍໃນດ້ານບຸກຄະລິກຄະພາບຂອງຜູ້ເສບຢາເສບຕິດ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວກັບຄືນໄປເສບຢາເສບຕິດອີກ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດມັກເປັນຄົນຊຶມເສົ້າຢູ່ຕະຫຼອດ, ຕໍ່ມາແມ່ນຜູ້ເສບຢາເສບຕິດເປັນຄົນມັກສົນໃຈແຕ່ຄວາມຮູ້ສຶກຂອງຕົນເອງເທົ່ານັ້ນ, ຜູ້ເສບຢາເສບຕິດມັກເປັນຄົນບໍ່ລະອຽດ ບໍ່ຮອບຄອບ ບໍ່ເຄົາລົບຕໍ່ລະບຽບກົດໝາຍ ແລະ ເປັນຄົນທີ່ບໍ່ມີເຫດຜົນ, ຜູ້ເສບຢາເສບຕິດມັກເປັນຄົນວິຕົກກັງວົນ ຫງຸດຫງິດໃຈຮ້າຍງ່າຍ ແລະ ຜູ້ເສບຢາເສບຕິດມັກເປັນຄົນມີຄວາມໄຝ່ຝັນສູງເກີນໄປ (ຫຼື ມີຈິນຕະນາການສູງເກີນໄປ) ກ່ຽວກັບເລື່ອງທີ່ເປັນໄປບໍ່ໄດ້ ຫຼື ເລື່ອງທີ່ຕົນເອງບໍ່ສາມາດເຮັດໄດ້ຕາມລຳດັບ; ປັດໄຈດ້ານປະສົບການດຳລົງຊີວິດ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດເປັນຄົນມັກຢູ່ກັບໝູ່ທີ່ບໍ່ດີ ແລະ ພົບປະກັບຄົນເສບຢາເສບຕິດເປັນປະຈຳ, ຜູ້ເສບຢາເສບຕິດມັກເຂົ້າຮ່ວມກິດຈະກຳຕ່າງໆທີ່ບໍ່ດີ ເຊັ່ນ: ຊຸມແຊວເຫຼົ້າເບຍຕາມຮ້ານບັນເທີງ, ຫຼິ້ນການພະນັນ, ຫຼິ້ນໂສເພນີ, ມົ້ວສຸມຢາເສບຕິດ ແລະ ອື່ນໆ, ຜູ້ເສບຢາເສບຕິດສາມາດເຂົ້າກັບຄົນແປກໜ້າໄດ້ງ່າຍ, ຜູ້ເສບຢາເສບຕິດບໍ່ມັກຊ່ວຍເຫຼືອຄົນອື່ນ ແລະ ບໍ່ເປັນທີ່ໄວ້ວາງໃຈຂອງໝູ່ເພື່ອນ ແລະ ຜູ້ເສບຢາເສບຕິດເປັນຄົນທີ່ມີຄວາມມຸ່ງໝັ້ນຫຼາຍເກີນໄປ ແລະ ເອົາໃຈໃສ່ໃນສິ່ງທີ່ຕົນເອງຢາກເຮັດ ແຕ່ວ່າເມື່ອຕົນເອງເຮັດສິ່ງນັ້ນບໍ່ບັນລຸຜົນສຳເລັດແລ້ວຈະໝົດຄວາມຫວັງ ຈົນບໍ່ສາມາດຈະເດີນໜ້າຕໍ່ໄປໄດ້ອີກ ຕາມລຳດັບ; ປັດໄຈດ້ານທັດສະນະຄະຕິຕໍ່ຢາເສບຕິດ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດຄິດວ່າ ການລອງເສບຢາເສບຕິດພຽງ 1 ຄັ້ງ ຫຼື 2 ຄັ້ງ ຈະບໍ່ສາມາດເຮັດໃຫ້ຕົນຕິດຢາເສບຕິດໄດ້, ຜູ້ເສບຢາເສບຕິດຄິດວ່າ ຕົນເອງຈະມີຊີວິດຊີວາ ຈິດໃຈກ້າຫານ ບໍ່ຢ້ານກົວຕໍ່ອຸປະສັກໃດໆ ເມື່ອໄດ້ເສບຢາເສບຕິດ, ຜູ້ເສບຢາເສບຕິດບໍ່ຮູ້ວ່າຖ້າໃຜຕິດຢາເສບຕິດແລ້ວ ຈະເລີກຢາເສບຕິດໄດ້ຍາກທີ່ສຸດ, ຜູ້ເສບຢາເສບຕິດບໍ່ຮູ້ວ່າການເສບຢາເສບຕິດເຮັດໃຫ້ສະໝອງ ແລະ ຮ່າງການຖືກທຳລາຍ ແລະ ຜູ້ເສບຢາເສບຕິດບໍ່ຮູ້ວ່າການຢາເສບຕິດເຮັດໃຫ້ເສຍອະນາຄົດຂອງຕົນເອງ ແລະ ກໍ່ໃຫ້ເກີດບັນຫາຄວາມວຸ້ນວາຍໃນສັງຄົມຕາມລຳດັບ; ປັດໄຈດ້ານການລ້ຽງດູຂອງພໍ່ແມ່ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ພໍ່ແມ່ຕາມໃຈລູກຫຼາຍເກີນໄປ ລູກຢາກໄດ້ຫຍັງ ພໍ່ແມ່ຕອບສະໜອງໃຫ້ເລີຍ, ພໍ່ແມ່ເຂັ້ມງວດຕໍ່ລູກຫຼາຍເກີນໄປ ຈົນເຮັດໃຫ້ລູກຮູ້ສຶກອຶດອັດ ຫຼື ຂາດຄວາມເປັນອິດສະ ຫຼະ, ພໍ່ແມ່ສະແດງຄວາມຮັກຕໍ່ລູກບໍ່ເທົ່າທຽມກັນ, ພໍ່ແມ່ມັກຜິດຖຽງກັນທຸກວັນໃຫ້ລູກເຫັນ ສິ່ງຜົນສະທ້ອນອັນບໍ່ດີໃຫ້ລູກ ແລະ ພໍ່ແມ່ຢ່າຮ້າງກັນ ຫຼື ພໍ່ແມ່ແຍກທາງກັນຢູ່ຄົນລະບ່ອນ ເຮັດໃຫ້ລູກຂາດຄອບຄົວທີ່ສົມບູນ ຕາມລຳດັບ; ປັດໄຈດ້ານການສຶກສາອົບຮົມຂອງພໍ່ແມ່ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປເສບຢາເສບຕິດອີກ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ພໍ່ແມ່ສ່ວນຫຼາຍໃຫ້ຄວາມເປັນອິດສະຫຼະຕໍ່ລູກຫຼາຍບໍ່ເຄີຍຮ້າຍ ບໍ່ເຄີຍດ່າ ແລະ ບໍ່ເຄີຍຕັກເຕືອນລູກຫຍັງເລີຍ, ພໍ່ແມ່ບໍ່ຮັບຟັງຄວາມຄິດເຫັນຂອງຜູ້ເປັນລູກ, ພໍ່ແມ່ມີແຕ່ລົງໂທດ ຫຼື ປ້ອຍດ່າໂດຍບໍ່ອະທິບາຍເຫດຜົນຕໍ່ລູກ, ພໍ່ແມ່ສັ່ງສອນໂດຍໃຊ້ຖ້ອຍຄຳຮຸນແຮງ ຫຼື ປ້ອຍດ່າເປັນປະຈຳ, ລົງໂທດຮຸນແຮງ ຫຼື ຕົບຕີເມື່ອລູກໄດ້ເຮັດຜິດສິ່ງໃດສິ່ງໜຶ່ງ ຕາມລຳດັບ; ປັດໄຈດ້ານຄວາມຮູ້ກ່ຽວກັບຢາເສບຕິດຈາກຄອບຄົວ ແລະ ດ້ວຍຕົນເອງ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ພໍ່ແມ່ ຫຼື ຜູ້ປົກຄອງ ບໍ່ໄດ້ໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍ ແລະ ຜົນເສຍຈາກຢາເສບຕິດແກ່ລູກຮູ້ຢ່າງເປັນປະຈຳ, ຜູ້ເສບຢາເສບຕິດບໍ່ມັກຄົ້ນຫາຂໍ້ມູນກ່ຽວກັບໂທດຂອງຢາ

ເສບຕິດຈາກສື່ທາງອອນລາຍເປັນປະຈຳ, ຜູ້ເສບຢາເສບຕິດບໍ່ໄດ້ຊອກຮູ້ກ່ຽວກັບຜົນຮ້າຍ ແລະ ຜົນເສຍຂອງຢາເສບຕິດຈາກຄູອາຈານ ໝູ່ເພື່ອນ ແລະ ຫໍສະໝຸດໃນໂຮງຮຽນ, ຜູ້ເສບຢາເສບຕິດບໍ່ໄດ້ຊອກຮູ້ກ່ຽວກັບຜົນຮ້າຍ ແລະ ຜົນເສຍຂອງຢາເສບຕິດນຳພີ່ນ້ອງ ອາວອາ ແລະ ປ້າລຸງຂອງຕົນເອງ ແລະ ຜູ້ເສບຢາເສບຕິດບໍ່ໄດ້ຕິດຕາມຂໍ້ມູນຂ່າວສານກ່ຽວກັບຢາເສບຕິດຈາກໜັງສືພິມ, ວິທະຍຸ ແລະ ໂທລະທັດຢ່າງເປັນປະຈຳຕາມລຳດັບ; ປັດໄຈດ້ານການຕິດຢາເສບຕິດມາຈາກຕົນເອງ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດຕ້ອງການສະແດງທ່າທີ ຕໍ່ຕ້ານຄຳສັ່ງສອນ ຕ້ານຂໍ້ຫ້າມຕ່າງໆຂອງຜູ້ປົກຄອງ ຫຼື ການຈັດຕັ້ງ, ຜູ້ເສບຢາເສບຕິດ ມັກເປັນຄົນຈິດໃຈອ່ອນໄຫວ ແລະ ເຊື່ອຟັງຄົນອື່ນງ່າຍ, ຜູ້ເສບຢາເສບຕິດບໍ່ສາມາດແກ້ໄຂບັນຫາຂອງຕົນເອງໄດ້, ຜູ້ເສບຢາເສບຕິດມັກນຳໃຊ້ຢາເສບຕິດ ເພື່ອຫຼຸດຜ່ອນຄວາມກະວົນກະວາຍ ຄວາມທຸກໃຈ ແລະ ຄວາມໂດດດ່ຽວ ແລະ ຜູ້ເສບຢາເສບຕິດເປັນຄົນຢາກຮູ້ ຢາກລອງສິ່ງທີ່ທ້າທາຍ ແລະ  ຢາກມີປະສົບການໃນສິ່ງທີ່ແປກໆດ້ວຍຕົນເອງ ຕາມລຳດັບ; ປັດໄຈດ້ານການຕ້ານ ແລະ ປ້ອງກັນຢາເສບຕິດດ້ວຍຕົນເອງ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດມັກໄປນຳໝູ່ເພື່ອນທີ່ເສບຢາເສບຕິດ, ຜູ້ເສບຢາເສບຕິດບໍ່ໄດ້ປະຕິເສດທຸກຄັ້ງ ເມື່ອມີໝູ່ເພື່ອນຊວນໃຫ້ລາວລອງຢາເສບຕິດນຳເຂົາເຈົ້າ, ຜູ້ເສບຢາເສບຕິມັກໄປທ່ຽວສະຖານທີ່ບັນເທີງຕ່າງໆ ເພາະວ່າທີ່ນັ້ນເປັນສະຖານທີ່ທີ່ມີຢາເສບຕິດ, ຜູ້ເສບຢາເສບຕິດບໍ່ເຄີຍຕັກເຕືອນ ແລະ ຫ້າມໝູ່ເພື່ອນ ເມື່ອຮູ້ວ່າເຂົາເຈົ້າຄິດຈະລອງຢາເສບຕິດ ແລະ ຜູ້ເສບຢາເສບຕິດພະຍາຍາມຈະສູບຢາ, ດື່ມເຫຼົ້າ ຫຼື ດື່ມເບຍນຳໝູ່ເພື່ອນ ຕາມລຳດັບ.

ປັດໄຈພາຍນອກດ້ານຄວາມຮັບຮູ້ກ່ຽວກັບຢາເສບຕິດຈາກການຈັດຕັ້ງ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປ ເສບຢາເສບຕິດອີກ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ທາງການຈັດຕັ້ງບ້ານ ຫຼື ກຸ່ມບ້ານບໍ່ໄດ້ໄປໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍ ແລະ ຜົນເສຍຂອງຢາເສບຕິດຢ່າງເປັນປະຈຳ, ທາງໂຮງຮຽນ ຫຼື ການຈັດຕັ້ງບ້ານຂອງຜູ້ເສບຢາເສບຕິດບໍ່ໄດ້ໃຫ້ຄວາມຮູ້ກ່ຽວກັບໂທດຂອງຢາເສບຕິດ, ທາງໂຮງຮຽນ ຫຼື ການຈັດຕັ້ງບ້ານຂອງຜູ້ເສບຢາເສບຕິດບໍ່ໄດ້ໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍ ແລະ ຜົນເສຍຂອງຢາເສບຕິດ, ທາງໂຮງຮຽນ ຫຼື ການຈັດຕັ້ງບ້ານຂອງຜູ້ເສບຢາເສບຕິດບໍ່ໄດ້ຈັດກິດຈະກຳກ່ຽວກັບການປ້ອງກັນບັນຫາຢາເສບຕິດ ແລະ ໜ່ວຍງານການປ້ອງກັນ ແລະ ປາບປາມຢາເສບຕິດທີ່ກ່ຽວຂ້ອງບໍ່ໄດ້ໄປເຜີຍແຜ່ຄວາມຮູ້ກ່ຽວກັບບັນຫາຂອງຢາເສບຕິດໃຫ້ຜູ້ເສບຢາເສບຕິດໄດ້ຮັບຮູ້ ຕາມລຳດັບ; ປັດໄຈດ້ານສັງຄົມ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜູ້ເສບຢາເສບຕິດຕ້ອງການການຍອມຮັບຈາກໝູ່ເພື່ອນ ຫຼື ກຸ່ມເພື່ອນໃນສັງຄົມ, ຜູ້ເສບຢາເສບຕິດມັກພົວພັນກັບໝູ່ເພື່ອນ ຫຼື ກຸ່ມເພື່ອນທີ່ໃຊ້ສານເສບຕິດເປັນປະຈຳ, ຜູ້ເສບຢາເສບຕິດມັກຫຼິ້ນໄພສັງຄົມ ແລະ ມັກທ່ຽວກັບເພື່ອນຝູງທີ່ບໍ່ດີໃນສັງຄົມ, ຜູ້ເສບຢາເສບຕິດຕ້ອງການຄວາມສະໜຸກສະໜານ ແລະ ກ້າສະແດງອອກເມື່ອໄປກັບໝູ່ເພື່ອນໃນສັງຄົມ ແລະ ຜູ້ເສບຢາເສບຕິດຖືກໝູ່ເພື່ອນທ້າທາຍໃຫ້ເສບຢາເສບຕິດ ຕາມລຳດັບ; ປັດໄຈດ້ານສະພາບແວດລ້ອມ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ເຮືອນຂອງຜູ້ເສບຢາເສບຕິດຢູ່ໃກ້ກັບສະຖານທີ່ບັນເທີງ ຫຼື ແຫຼ່ງມົ້ວສຸມຢາສເບຕິດ, ມີສະຖານບັນເທີງຢູ່ທົ່ວໄປໃນຊຸມຊົນຂອງຜູ້ເສບຢາເສບຕິດ, ມີແຫຼ່ງທີ່ເປັນສະຖານທີ່ເສບຢາເສບຕິດຢູ່ທົ່ວໄປໃນຊຸມຊົນຂອງຜູ້ເສບຢາເສບຕິດ, ພົບເຫັນບັນຫາຢາເສບຕິດຢູ່ໃນຊຸມຊົນຂອງຜູ້ເສບຢາເສບຕິດເປັນປະຈຳ ແລະ ເມື່ອມີງານລ້ຽງສ້າງສັນໃນຊຸມຊົນຂອງຜູ້ເສບຢາເສບຕິດແລ້ວມັກມີການໃຊ້ສານເສບຕິດ ເຊັ່ນ: ເຫຼົ້າ, ຢາສູບ, ຢາບ້າ, ຢາໄອ, ເຮໂລອິນ ເກືອບທຸກຄັ້ງ ຕາມລຳດັບ; ປັດໄຈດ້ານເສດຖະກິດ ເຫັນວ່າມີປັດໄຈທີ່ສຳຄັນຄື: ໃນເບື້ອງຕົ້ນໝູ່ເພື່ອນຈະຊື້ຢາເສບຕິດໃຫ້ຜູ້ເສບຢາເສບຕິດເສບຟີໄປກ່ອນ, ຜູ້ເສບຢາເສບຕິດເປັນລູກຂອງຄອບ ຄົວທີ່ຮັ່ງມີ ແຕ່ລະມື້ພໍ່ແມ່ເອົາເງິນໃຫ້ຫຼາຍ, ຢາເສບຕິດທີ່ມີຂາຍທົ່ວໄປໃນຊຸມຊົນລາຄາບໍ່ແພງ, ຜູ້ເສບຢາເສບຕິດເຂົ້າໃຈວ່າ ຫຼັງຈາກເສບຢາເສບຕິດແລ້ວມີໂອກາດຫາເງິນໄດ້ງ່າຍ ແລະ ຜູ້ເສບຢາເສບຕິດເປັນລູກຂອງຄອບຄົວທຸກຍາກ ແຕ່ລະມື້ພໍ່ແມ່ບໍ່ເອົາເງິນໃຫ້ເລີຍ ຕາມລຳດັບ; ປັດໄຈດ້ານການຕິດຢາເສບຕິດມາຈາກຄົນອື່ນ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ມາຈາກການຊັກຊວນ ແລະ ຫຼອກລວງຈາກໝູ່ເພື່ອນ, ການເສບຢາເສບຕິດຂອງຜູ້ເສບຢາເສບຕິດ ເພື່ອເປັນການພັກຜ່ອນຢ່ອນອາລົມ, ຜູ້ເສບຢາເສບຕິດໄດ້ຂາດການເບິ່ງແຍງ ແລະ ສັ່ງສອນຢ່າງໃກ້ຊິດຈາກພໍ່ແມ່, ຜູ້ເສບຢາເສບຕິດຖືກບັງຄັບໃຫ້ເສບຢາເສບຕິດຈາກຄົນອື່ນ ແລະ ການເສບຢາເສບຕິດຂອງຜູ້ເສບຢາເສບຕິດ ເພື່ອເປັນຢາປິ່ນປົວພະຍາດ ຕາມລຳດັບ; ປັດໄຈດ້ານການຊື້ຂາຍຢາເສບຕິດຢູ່ພາຍໃນທ້ອງຖິ່ນ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ມີພະນັກງານລັດຈຳນວນໜຶ່ງເອົາຢາ

ເສບຕິດມາຂາຍ, ມີແມ່ຄ້າລາຍໃຫຍ່ເອົາຢາເສບຕິດມາຂາຍ , ມີຄົນທີ່ມີອິດທິພົນຢູ່ໃນທ້ອງຖິ່ນເອົາຢາເສບຕິດມາຂາຍ, ມີປະຊາຊົນໃນຖ້ອງຖິ່ນຈຳນວນໜຶ່ງເອົາຢາເສບຕິດມາຂາຍ ແລະ ສາມາດຫາຊື້ຢາເສບຕິດໄດ້ໃນຊຸມຊົນ ຕາມລຳດັບ; ປັດໄຈດ້ານການຕ້ານ ການປ້ອງກັນຢາເສບຕິດຈາກ ຄອບຄົວ ແລະ ການຈັດຕັ້ງ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜ່ານມາການຈັດຕັ້ງບ້ານ ຫຼື ເຂດ ບໍ່ໄດ້ມີມາດຕະ ການ ສະກັດກັ້ນ ແລະ ວິທີການໃນການປ້ອງກັນຢາເສບຕິດທີ່ ເດັດຂາດ, ຜ່ານມາໂຮງຮຽນບໍ່ໄດ້ມີມາດຕະການສະກັດກັ້ນ ແລະ ວິທີການໃນການປ້ອງກັນຢາເສບຕິດທີ່ດີ, ຜ່ານມາ ໜ່ວຍງານສະກັດກັ້ນ ແລະ ຕ້ານຢາເສຍຕິດທີ່ກ່ຽວຂ້ອງ ບໍ່ ໄດ້ມີມາດຕະການສະກັດກັ້ນ ແລະ  ວິທີການໃນການປາບ ປາມຢາເສບຕິດທີ່ເດັດຂາດ, ຜ່ານມາການຈັດຕັ້ງບ້ານ ຫຼື ເຂດ ບໍ່ມີມາດຕະການຕ້ານ ແລະ  ວິທີການໃນການປາບ ປາມຢາເສບຕິດທີ່ດີ ແລະ ຜ່ານມາພໍ່ແມ່ ອາວອາ ແລະ ປ້າ ລຸງພາຍໃນບ້ານບໍ່ໄດ້ເວົ້າສະເໜີ ບໍ່ໃຫ້ຜູ້ເສບຢາເສບຕິດໄປ ພົວພັນກັບຢາເສບຕິດ ຕາມລຳດັບ; ປັດໄຈດ້ານການ ລົງໂທດຕໍ່ຜູ້ຊື້ຂາຍຍ່ອຍ ແລະ ຜູ້ເສບຢາເສບຕິດ ເຫັນວ່າ ມີ ປັດໄຈທີ່ສຳຄັນຄື: ຜ່ານມາບໍ່ໄດ້ມີການລົງໂທດຕໍ່ຜູ້ຊື້ຂາຍຢາ ເສບຕິດລາຍຍ່ອຍຢູ່ພາຍໃນທ້ອງຖິ່ນ, ຜ່ານການລົງໂທດຕໍ່ ຜູ້ຊື້ຂາຍຢາເສບຕິດລາຍຍ່ອຍເບົາຫຼາຍ, ຜ່ານມາບໍ່ໄດ້ມີການ ສຶກສາອົບຮົມຕໍ່ຜູ້ເສບຢາເສບຕິດ, ຜ່ານມາບໍ່ໄດ້ມີການ ລົງໂທດຕໍ່ຜູ້ເສບຢາເສບຕິດ ແລະ ຜ່ານມາການລົງໂທດຕໍ່ຜູ້ ຊື້ຂາຍຢາເສບຕິດລາຍຍ່ອຢູ່ຍລະດັບປານກາງ ຕາມລຳດັບ; ປັດໄຈດ້ານການລົງໂທດຕໍ່ຜູ້ຂາຍຢາເສບຕິດລາຍໃຫຍ່ ແລະ ພະນັກງານລັດ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ຜ່ານມາ ບໍ່ມີການລົງໂທດຕໍ່ຜູ້ທີ່ມີອິດທິພົນ ທີ່ຢູ່ເບື້ອງຫຼັງຂອງການຊື້ ຂາຍຢາເສບຕິດ, ຜ່ານມາບໍ່ມີການລົງໂທດຕໍ່ຜູ້ທີ່ມີອິດທິພົນ ທີ່ຊື້ຂາຍຢາເສບຕິດ, ຜ່ານມາບໍ່ມີການລົງໂທດຕໍ່ພະນັກງານ ລັດ ທີ່ຊື້ຂາຍຢາເສບຕິດ, ຜ່ານມາບໍ່ມີການລົງໂທດຕໍ່ ພະນັກງານຮັບຜິດຊອບວຽກງານການຕ້ານ ສະກັດກ້ານ ແລະ ປາບປາມຢາເສບຕິດ ເມື່ອເຂົາເຈົ້າບໍ່ປະຕິບັດຕາມໜ້າ ທີ່ຂອງຕົນເອງ ແລະ ຜ່ານມາບໍ່ມີການລົງໂທດຕໍ່ຜູ້ຂາຍຢາ ເສບຕິດລາຍໃຫຍ່ ຕາມລຳດັບ.

## 4. ວິພາກຜົນ

ຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນ ເພດຊາຍ, ມີອາຍຸຢູ່ໃນຊ່ວງ 25-30 ປີ, ມີອ້າຍເອື້ອຍນ້ອງຮ່ວມພໍ່ແມ່ ດຽວກັນ 3 ຄົນ,ສະຖານະພາບ ແມ່ນຍັງໂສດ, ມີລະດັບ ການສຶກສາ ແມ່ນຮຽນມັດທະຍົມຕອນຕົ້ນ, ມີອາຊີບ ເປັນກຳມະກອນຮັບຈ້າງ, ມີລາຍຮັບສະເລ່ຍຕໍ່ເດືອນທີ່ບໍ່ ແນ່ນອນ, ມີຖານະຄອບຄົວປານກາງ, ປະເພດຢາເສບຕິດ ທີ່ຜູ້ເສບຢາເສບຕິດເຄີຍເສບຫຼາຍກວ່າໝູ່ແມ່ນ ປະເພດຢາ ບ້າ, ບຸກຄົນໃກ້ຊິດທີ່ສຸດຂອງຜູ້ເສບຢາເສບຕິດທີ່ເຮັດໃຫ້ ຕົນເອງໄປເສບຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ ແລະ ແມ່ນຕົວຜູ້ກ່ຽວຕັ້ງໃຈໄປເສບຢາເສບຕິດເອງ, ບຸກຄົນທີ່ມີ ຄວາມສຳຄັນທີ່ສຸດທີ່ເຮັດໃຫ້ຜູ້ຕອບແບບສອບຖາມເສບ ຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ, ຜູ້ກ່ຽວຕັ້ງໃຈໄປເສບຢາ ເສບຕິດເອງ ແລະ ຈຳນວນຄັ້ງທີ່ມາບຳບັດຢາເສບຕິດ ແມ່ນ 2 ຄັ້ງ. ເຊິ່ງສອດຄ່ອງກັບການຄົ້ນຄວ້າວິໄຈຂອງ Bounngarath SOTHSAY (2003) ໄດ້ສຶກສາກ່ຽວກັບ ປັດໄຈທີ່ພົວພັນກັບການຫວນຄືນມາຕິດຢາເສບຕິດ ຂອງ ໄວລຸ້ນ ຜົນການສຶກສາພົບວ່າ ກຸ່ມຕົວຢ່າງສ່ວນໃຫຍ່ທີ່ ຫວນກັບມາຕິດຢາບ້າເປັນເພດຊາຍ, ມີອາຍຸລະຫວ່າງ 15-20 ປີ, ລະດັບການສຶກສາມັດທະຍົມສຶກສາ, ມີອາຊີບເປັນ ນັກຮຽນ-ນັກສຶກສາ ແລະ ອາຊີບຮັບຈ້າງ, ມີລາຍໄດ້ຕໍ່ ເດືອນ 1,000-3,000 ບາດ.

ປັດໄຈພາຍໃນ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳ ບັດດີມາແລ້ວ ກັບຄືນໄປເສບຢາເສບຕິດອີກ ເຫັນວ່າ ມີປັດ ໄຈທີ່ສຳຄັນຄື: ປັດໄຈດ້ານບຸກຄະລິກຄະພາບຂອງຜູ້ເສບຢາ ເສບຕິດ, ປັດໄຈດ້ານປະສົບການດຳລົງຊີວິດ, ປັດໄຈດ້ານ ທັດສະນະຄະຕິຕໍ່ຢາເສບຕິດ, ປັດໄຈດ້ານການລ້ຽງດູຂອງພໍ່ ແມ່, ປັດໄຈດ້ານການສຶກສາອົບຮົມຂອງພໍ່ແມ່, ປັດໄຈດ້ານ ຄວາມຮູ້ກ່ຽວກັບຢາເສບຕິດຈາກຄອບຄົວ ແລະ ດ້ວຍຕົນ ເອງ, ປັດໄຈດ້ານການຕິດຢາເສບຕິດມາຈາກຕົນເອງ, ປັດ ໄຈດ້ານການຕ້ານ ແລະ ປ້ອງກັນຢາເສບຕິດດ້ວຍຕົນເອງ ເຊິ່ງມີຄວາມແຕກຕ່າງກັບ ການຄົ້ນຄວ້າວິໄຈຂອງ Bounleng TANGNOKHANON (2001) ໄດ້ສຶກສາ ກ່ຽວກັບ ປັດໄຈທີ່ນຳໄປສູ່ການເສບຢາບ້າຂອງນັກສຶກສາ ວິທະຍາໄລເທັກນິກຊຽງໃໝ່ ດ້ວຍວິທີບັນຍາຍ ໂດຍມີ ຈຸດປະສົງ ເພື່ອຊອກຫາປັດໄຈທີ່ນຳໄປສູ່ການເສບຢາບ້າ ຂອງນັກສຶກສາ, ພຶດຕິກຳສ່ຽງ ແລະ ແນວທາງການປ້ອງກັນ ການເສບຢາ ຜົນຂອງການວິໄຈພົບວ່າ ປັດໄຈທີ່ເຮັດໃຫ້ຄົນ ນຳໄປສູ່ການເສບຢາບ້າໄດ້ແກ່ ປັດໄຈສ່ວນບຸກຄົນ, ປັດໄຈ ດ້ານສັງຄົມ ແລະ ສະພາບແວດລ້ອມ, ປັດໄຈສ່ຽງຕໍ່ການ ເສບຢາບ້າຂອງນັກສຶກສາຢູ່ໃນລະດັບປານກາງ ໄດ້ແກ່ ປັດ ໄຈດ້ານສັງຄົມ ແລະ ສິ່ງແວດລ້ອມ, ນອກນັ້ນເປັນປັດໄຈ

ສ່ຽງນ້ອຍ, ພຶດຕິກຳສ່ຽງຕໍ່ການເສບຢາບ້າຂອງນັກສຶກສາຢູ່ໃນລະດັບໜ້ອຍ ແລະ ແນວທາງໃນການປ້ອງກັນການເສບຢາບ້າຂອງນັກ ສຶກສາປະກອບດ້ວຍການທຳການສຶກສາວິໄຈການສ້າງນະໂຍບາຍ, ສ້າງກົດລະບຽບ, ສ້າງຄວາມເຂັ້ມແຂງ ແລະ ການມີການປ້ອງກັນ.

ປັດໄຈພາຍນອກ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປ ເສບຢາເສບຕິດອີກ ໄດ້ແກ່ ປັດໄຈດ້ານຄວາມຮັບຮູ້ກ່ຽວກັບຢາເສບຕິດຈາກການຈັດຕັ້ງ, ປັດໄຈດ້ານສັງຄົມ, ປັດໄຈດ້ານສະພາບແວດລ້ອມ, ປັດໄຈດ້ານເສດຖະກິດ, ປັດໄຈດ້ານການຕິດຢາເສບຕິດມາຈາກຄົນອື່ນ, ປັດໄຈດ້ານການຊື້ຂາຍຢາເສບຕິດຢູ່ພາຍໃນທ້ອງຖິ່ນ, ປັດໄຈດ້ານການຕ້ານການປ້ອງກັນຢາເສບຕິດຈາກຄອບຄົວ ແລະ ການຈັດຕັ້ງ, ປັດໄຈດ້ານການລົງໂທດຕໍ່ຜູ້ຊື້ຂາຍຍ່ອຍ ແລະ ຜູ້ເສບຢາເສບຕິດ, ປັດໄຈດ້ານການລົງໂທດຕໍ່ຜູ້ຂາຍຢາເສບຕິດລາຍໃຫຍ່ ແລະ ພະນັກງານລັດ ເຊິ່ງສອດຄ່ອງກັບການຄົ້ນຄວ້າວິໄຈຂອງ Bounngarath SOTHSAY (2003) ໄດ້ສຶກສາກ່ຽວກັບ ປັດໄຈທີ່ພົວພັນກັບການຫວນຄືນມາຕິດຢາເສບຕິດ ຂອງໄວລຸ້ນ ຜົນການສຶກສາພົບວ່າ ວິທີການອົບຮົມສັ່ງສອນທີ່ກຸ່ມຕົວຢ່າງໄດ້ຮັບກ່ອນເສບຢາບ້າແມ່ນການສັ່ງສອນແບບດຸດ່າ ແລະ ໃສ່ໂທດ, ການກະທຳຜິດຂອງກຸ່ມຕົວຢ່າງກ່ອນເສບຢາບ້າພໍ່-ແມ່ຮ້າຍດ່າ ຫຼື ລົງໂທດ, ສິ່ງຈູງໃຈທີ່ເຮັດໃຫ້ໄວລຸ້ນກັບຄືນມາຕິດຢາບ້າ ມີສາເຫດຈາກເພື່ອນຊັກຊວນ, ຫວນກັບຄືນມາເສບຢາບ້າ ເນື່ອງຈາກຂາດຄວາມອົບອຸ່ນໃນຄອບຄົວ.

## 5. ສະຫຼຸບ

ຕອບແບບສອບຖາມສ່ວນໃຫຍ່ແມ່ນ ເພດຊາຍ, ມີອາຍຸຢູ່ໃນຊ່ວງ 25-30 ປີ, ມີອ້າຍເອື້ອຍນ້ອງຮ່ວມພໍ່ແມ່ດຽວກັນ 3 ຄົນ,ສະຖານະພາບ ແມ່ນຍັງໂສດ, ມີລະດັບການສຶກສາ ແມ່ນຮຽນມັດທະຍົມຕອນຕົ້ນ, ມີອາຊີບເປັນກຳມະກອນຮັບຈ້າງ, ມີລາຍຮັບສະເລ່ຍຕໍ່ເດືອນທີ່ບໍ່ແນ່ນອນ, ມີຖານະຄອບຄົວປານກາງ, ປະເພດຢາເສບຕິດທີ່ຜູ້ເສບຢາເສບຕິດເຄີຍເສບຫຼາຍກວ່າໝູ່ແມ່ນ ປະເພດຢາບ້າ, ບຸກຄົນໃກ້ຊິດທີ່ສຸດຂອງຜູ້ເສບຢາເສບຕິດທີ່ເຮັດໃຫ້ຕົນເອງໄປເສບຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ ແລະ ແມ່ນຕົວຜູ້ກ່ຽວຕັ້ງໃຈໄປເສບຢາເສບຕິດເອງ, ບຸກຄົນທີ່ມີຄວາມສຳຄັນທີ່ສຸດທີ່ເຮັດໃຫ້ຜູ້ຕອບແບບສອບຖາມເສບຢາເສບຕິດ ແມ່ນໝູ່ເພື່ອນທົ່ວໄປ, ຜູ້ກ່ຽວຕັ້ງໃຈໄປເສບຢາເສບຕິດເອງ ແລະ ຈຳນວນຄັ້ງທີ່ມາບຳບັດຢາເສບຕິດ ແມ່ນ 2 ຄັ້ງ.

ປັດໄຈພາຍໃນ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປເສບຢາເສບຕິດອີກ ເຫັນວ່າ ມີປັດໄຈທີ່ສຳຄັນຄື: ປັດໄຈດ້ານບຸກຄະລິກຄະພາບຂອງຜູ້ເສບຢາເສບຕິດ, ປັດໄຈດ້ານປະສົບການດຳລົງຊີວິດ, ປັດໄຈດ້ານທັດສະນະຄະຕິຕໍ່ຢາເສບຕິດ, ປັດໄຈດ້ານການລ້ຽງດູຂອງພໍ່ແມ່, ປັດໄຈດ້ານການສຶກສາອົບຮົມຂອງພໍ່ແມ່, ປັດໄຈດ້ານຄວາມຮູ້ກ່ຽວກັບຢາເສບຕິດຈາກຄອບຄົວ ແລະ ດ້ວຍຕົນເອງ, ປັດໄຈດ້ານການຕິດຢາເສບຕິດມາຈາກຕົນເອງ, ປັດໄຈດ້ານການຕ້ານ ແລະ ປ້ອງກັນຢາເສບຕິດດ້ວຍຕົນເອງ.

ປັດໄຈພາຍນອກ ທີ່ເຮັດໃຫ້ຄົນຕິດຢາເສບຕິດໄປບຳບັດດີມາແລ້ວ ກັບຄືນໄປ ເສບຢາເສບຕິດອີກ ໄດ້ແກ່ ປັດໄຈດ້ານຄວາມຮັບຮູ້ກ່ຽວກັບຢາເສບຕິດຈາກການຈັດຕັ້ງ, ປັດໄຈດ້ານສັງຄົມ, ປັດໄຈດ້ານສະພາບແວດລ້ອມ, ປັດໄຈດ້ານເສດຖະກິດ, ປັດໄຈດ້ານການຕິດຢາເສບຕິດມາຈາກຄົນອື່ນ, ປັດໄຈດ້ານການຊື້ຂາຍຢາເສບຕິດຢູ່ພາຍໃນທ້ອງຖິ່ນ, ປັດໄຈດ້ານການຕ້ານການປ້ອງກັນຢາເສບຕິດຈາກຄອບຄົວ ແລະ ການຈັດຕັ້ງ, ປັດໄຈດ້ານການລົງໂທດຕໍ່ຜູ້ຊື້ຂາຍຍ່ອຍ ແລະ ຜູ້ເສບຢາເສບຕິດ, ປັດໄຈດ້ານການລົງໂທດຕໍ່ຜູ້ຂາຍຢາເສບຕິດລາຍໃຫຍ່ ແລະ ພະນັກງານລັດ.

## 6. ຂໍ້ຂັດແຍ່ງ

ທີມງານຂອງພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ທີມງານຂອງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ

ພັກປະຊາຊົນປະຕິວັດລາວ ຄະນະຈັດຕັ້ງສູນກາງພັກ. (2018). ສັງລວມເນື້ອໃນກອງປະຊຸມໃຫຍ່ຂອງພັກ ສະໄໝທີ IX. ເວບໄຊຂ່າວສານປະເທດລາວ. ນະຄອນຫຼວງວຽງຈັນ, ໜ້າທີ 3-4.

Bounngarath SOTHSAY . (2003). Factors with drug addicted drug people reconsume. Chiang Mai University, Page 24-36.

Bounleng TANGNOKHANON. (2014). Study the factors that lead to drug addiction among students of Chiang Mai Technology Colleges. Chiang Mai Technology Colleges, Page 32-46.

Cai Zhi Jie, Tan Yong Ji. (1996). Modelling of Mathematics. Shang Hai: Fu Dan University Press.

Jiang Qi Yuan. (2003). Modelling of Mathematics. Bei Jing: High Education Press.

Lisatteur LILIANOU. (2018). Study on the reason and cause of people to drug. Scientific Journal of National University of laos, vol:13 ,Page 122-133.

Phouvieng VONGPHACHAN. (2004). Actions to prevent and solve drug problems in secondary schools in Vientiane Capital area. Vientiane Capital: Department of General Education.

Somekeo SILAVONG. (2014). The problem of Foreigner management and drug solutions. Vientiane Capital: Ministry of Security.

Somkot MANGNORMEK. (2013). Annual report of Xiengkhuang province. Pek District: Press Office of Xiengkhuang Province

Sounthone PHOMMASONE. (2000). Basic Statistics MAT/ST1202. Vientiane Capital : Academic Committee of National University of Laos.

Suradeth ROTCHIDA. (2012). Student administration on drug problems. Phagnao Education, Page 53-68.

Thanabout THON THITY. (2001). Factors that influence serious drug use among senior high school students. Ministry of Education, Education Region 5, Page 20-36.

Thiraphone SOTHSAY. (2004). Factors that teenagers reconsume drug. Chiang Mai University, Page 50-66.

Thilaphone BOUNTHAN. (2004). Factors affecting the drug addiction of students in the College of Vocational Education in Nong Khai Province. Department of Vocational Education, Page 42-58.

Thongsavanh VONGSAVATH. (2014). The report of the last 5 years of the security work of the Police Headquarters. of Champasak Province. Pakse District: Champasak Provincial Police Headquarters.

Thradon HEMPHANF. (1998). Factors that influence the drug addiction of female teenagers. The Ang thong, Page. 36-48.